ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ທຫລ ລະນຶກວັນສາກົນ ຢຸດການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ






ໃນວັນທີ 22 ທັນວາ 2020 ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດຕັ້ງພິທີປາຖະກະຖາລະນຶກວັນສາກົນຢຸດການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ 25 ພະຈິກ ໂດຍການໃຫ້ກຽດເປັນປະທານຂອງທ່ານນາງ ບັນດິດ ປະທຸມວັນ ຮອງປະທານຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ, ຮອງປະທານຄະນະກໍາມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ (ຄຊກມດ) ແລະ ທ່ານນາງ ວັດທະນາ ດາລາລອຍ ຮອງຜູ້ວ່າການ ທຫລ, ປະທານຄະນະກໍາມະການສົ່ງເສີມເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ຢູ່ຂົງເຂດທະນາຄານ ພ້ອມດ້ວຍຜູ້ເຂົ້າຮ່ວມຈາກບັນດາກົມພາຍໃນ ທຫລ, ທະນາຄານທຸລະກິດລັດ ເຂົ້າຮ່ວມ 330 ທ່ານ.

ໃນພິທີ, ໄດ້ນໍາສະເໜີການສະຫຼຸບກ່ຽວກັບການຈັດຕັ້ງປະຕິບັດວຽກງານສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ຄວາມສະເໝີພາບຍິງ-ຊາຍ ແລະ ແມ່-ເດັກ ຢູ່ຂົງເຂດທະນາຄານ ໃນປີ 2020 ແລະ ແຜນການປີ 2021 ຈາກທ່ານນາງ ໄກສອນ ໄຊຍະພອນ ຮອງປະທານສະຫະພັນແມ່ຍິງ ທຫລ. ຫຼັງຈາກນັ້ນ, ທ່ານຮອງປະທານຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ ໄດ້ໃຫ້ກຽດບັນຍາຍກ່ຽວກັບປະຫວັດຄວາມເປັນມາຂອງວັນສາກົນຢຸດການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ 25 ພະຈິກ ໂດຍໄດ້ຍົກໃຫ້ເຫັນບັນຫາການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ທີ່ຍັງມີໃນທົ່ວໂລກ ແລະ ໃນປະເທດຂອງພວກເຮົາ.

ໃນຕອນທ້າຍຂອງພິທີ, ທ່ານຮອງຜູ້ວ່າການ ທຫລ ໄດ້ໃຫ້ກຽດມີຄໍາເຫັນຕໍ່ການຈັດຕັ້ງປະຕິບັດວຽກງານສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ຄວາມສະເໝີພາບຍິງ-ຊາຍ ແລະ ແມ່-ເດັກ ຢູ່ຂົງເຂດທະນາຄານ ຊຶ່ງໃນປີ 2020, ຂະແໜງການທະນາຄານໄດ້ເປັນເຈົ້າການຈັດຕັ້ງປະຕິບັດວຽກງານດັ່ງກ່າວດ້ວຍຄວາມຮັບຜິດຊອບສູງ ແລະ ສາມາດໄດ້ຮັບຜົນສໍາເລັດໃນຫຼາຍດ້ານ ຄື: 1. ໄດ້ສໍາເລັດໃນການສ້າງແຜນງານ-ໂຄງການ ເພື່ອຄວາມສະເໝີພາບຍິງ-ຊາຍ ແລະ ແມ່-ເດັກ ຢູ່ຂົງເຂດທະນາຄານໃນ 1 ປີ (ປີ 2020) ມີທັງໝົດ 5 ແຜນງານ ແລະ 11 ໂຄງການ ທີ່ຕິດພັນກັບວຽກງານຂອງບັນດາກົມພາຍໃນ ທຫລ ແລະ ທະນາຄານທຸລະກິດ; ສໍາເລັດບາງແຜນງານ-ໂຄງການ ເປັນຕົ້ນ: ວຽກງານຈັດຝຶກອົບຮົມ, ຈັດປາຖະກະຖາໃນຫົວຂໍ້ຕ່າງໆ, ວຽກງານການກໍານົດຖານສະຖິຕິ, ກໍານົດແບບຟອມເກັບກໍາສະຖິຕິ ແລະ ວຽກງານການປະຕິບັດລະບອບການລາຍງານການເຂົ້າເຖິງການບໍລິການທາງດ້ານການເງິນສໍາລັບເພດຍິງໄປຍັງອົງການສາກົນ ໂດຍຜ່ານ ຄຊກມດ ແລະ ໄດ້ມີບາດກ້າວອັນໃໝ່ໃນດ້ານການປະສານງານລະຫວ່າງ ຄະນະກໍາມະການສົ່ງເສີມເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ຢູ່ຂົງເຂດທະນາຄານ ແລະ ຄຊກມດ ຊຶ່ງໄດ້ຫັນການຮ່ວມມືໄປໃນທິດທາງດ້ານການຊຸກຍູ້ໃຫ້ວຽກງານທີ່ຕິດພັນກັບບັນດາກົມວິຊາສະເພາະສອດຄ່ອງກັບຄວາມຕ້ອງການຂອງຄະນະກໍາມະການ ຊີດໍ ສາກົນ ກໍານົດໄວ້ ໃນນີ້ແມ່ນວຽກງານຕິດພັນກັບເປົ້າໝາຍການ

ພັດທະນາແບບຍືນຍົງ (SDG) ທີ່ຕິດພັນກັບການເຂົ້າເຖິງການບໍລິການທາງດ້ານການເງິນສຳລັບເພດຍິງ ແລະ ອື່ນໆ. ພ້ອມກັນນີ້, ທ່ານຍັງຮຽກຮ້ອງໃຫ້ຄະນະກຳມະການສົ່ງເສີມເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ຢູ່ຂົງເຂດທະນາຄານ ຈົ່ງໄດ້ສູ້ຊົນບຸກບືນໃຫ້ບັນລຸເປົ້າໝາຍຂອງແຜນງານ-ໂຄງການໃນຊຸມປີຕໍ່ໜ້າ.





# ຂ່າວ-ພາບ: ນ. ວັນປະເສີດ ສິມບຸນຂັນ.

ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນຳໃຊ້ເງິນກີບ